rfa | ວິທຍຸເອເຊັຽເສຣີ

# ເຂື່ອນດອນສະໂຮງຈະມີແຕ່ເສັຽ

**ສີດາ**
2016.05.18




*ທາງການວ່າ ເຂື່ອນດອນສະໂຮງ ໂປ່ງໃສ ບໍ່ເປັນພັຍ ຕໍ່ທັມມະຊາດ*

ກຸ່ມນັກຂ່າວ BBC ຂອງອັງກິດ ເຂົ້າໄປຢ້ຽມຢາມ ພື້ນທີ່ ເຂື່ອນ ດອນສະໂຮງ ເມື່ອມໍ່ໆມານີ້ ຣາຍງານວ່າ ໂຄງການ ເຂື່ອນນ້ຳຂອງ ດອນສະໂຮງ ສ້າງຄວາມ ເຊື່ອມເສັຽ ຕໍ່ຊີວິດ ການເປັນຢູ່ ຂອງ ປະຊາຊົນ ທ້ອງຖິ່ນ ຣາຍໃຫຍ່ ເປັນຕົ້ນ ບ່ອນທຳມາ ຫາກິນ ການຕຶກປາ ວັດວາອາຣາມ ແລະ ວິຖີຊີວິດ ດັ້ງເດີມ ຂອງ ພວກຂະເຈົ້າ ຮ່ວມດ້ວຍ ຣາຍໄດ້ ສຳລັບ

ຄອບຄົວ ທີ່ຂະເຈົ້າ ເຄີຍໄດ້ຮັບ ຈາກການ ຕຶກປາ ແບບໂບຮານ ກໍສູນຫາຍ ໄປໝົດ.

ປາ ແມ່ນ ປໂຣຕີນ ສໍາລັບ ຮ່າງກາຍ ຂອງ ພວກຂະເຈົ້າ ຄອບຄົວ ຊາວລາວ ຊາວ ກໍາພູຊາ ແລະ ວຽດນາມ ໃນເຂດ ລຸ່ມ ແມ່ນໍ້າຂອງ ອາສັຍ ປໂຣຕີນ ຈາກປາ ສໍາລັບລ້ຽງ ຮ່າງກາຍ ມາແຕ່ ດຶກດໍາບັນ ກໍຂາດແຄນ ສິ່ງ ດັ່ງກ່າວ ຫລັງຈາກ ການສ້າງເຂື່ອນ ດອນສະໂຮງ. ຊາວບ້ານ ທ່ານນຶ່ງ ເວົ້າວ່າ ແຕ່ກ່ອນ ການຕຶກປາ ແບບໂບຮານ ໃນເຂດນີ້ ຈະໄດ້ປາ ເປັນ ຈໍານວນ ຫຼວງຫຼາຍ ໃນ ແຕ່ລະມື້. ນອກຈາກ ຈະໃຊ້ລ້ຽງ ຄອບຄົວ ແລ້ວ ຍັງໄດ້ເອົາ ໄປຂາຍ ເພື່ອສ້າງ ຣາຍໄດ້ ໃຫ້ແກ່ ຄອບຄົວ ນໍາອີກ ຊື່ງ ໃນເວລານີ້ ປາ ທີ່ຈະໃຫ້ ຕຶກນັ້ນ ກໍຫາຍໄປ ໝົດ.

ນອກຈາກ ການຫາປາ ແລ້ວ ການເຮັດ ກະສິກັມ ປູກເຂົ້າ ແລະ ປູກພືດຊນິດອື່ນໆ ກໍລໍາບາກ ຍ້ອນວ່າ ຂາດທີ່ດິນ ໃນ ການ ປູກຝັງ. ຊາວບ້ານ ຜູ້ທີ່ຖືກ ໂຍກຍ້າຍ ຍັງບໍ່ມີ ທີ່ດິນ ໃນການປູກຝັງ ເພື່ອລ້ຽງຊີບ ຢ່າງພຽງພໍ. ທາງການ ແລະ ໂຄງການ ເຂື່ອນ ດອນສະໂຮງ ໃຫ້ ຄ່າຊົດເຊີຍ ບໍ່ສົມເຫດ ສົມຜົລ ຊາວບ້ານ ຍັງຕ້ອງການ ການຊ່ອຍເຫລືອ ຢູ່.